# ບົດຮຽນໂຮງຮຽນວັນອາທິດ

**ວັນອາທິດ ທີ 10 ມັງກອນ 2010 (1-10-2010)**

## ການປໍ້າກຸມກັບເວລາ

**ຂໍ້ພຣະຄັມພີໃນບົດຮຽນ:** ປັນຍາຈານ 3:1-14

### ບົດຮຽນນີ້ສາມາດສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ

ບົດຮຽນນີ້ສາມາດຊ່ວຍທ່ານໃຫ້ຮູ້ຄຸນຄ່າຂອງເວລາວ່າເປັນຂອງຂວັນມາຈາກພຣະເຈົ້າແລະຕັດສິນໃຈເດັດຂາດເບິ່ງໄປໄກໆກັບຄວາມຊ່ວຍເຫຼືອຂອງພຣະເຈົ້າໃນເວລາອັນຖືກຕ້ອງສໍາລັບການກະທໍາທີ່ຖືກຕ້ອງ.

### ບົດຮຽນນີ້ເວົ້າກ່ຽວກັບຫຍັງ

ພວກເຮົາຖືກສ້າງໃຫ້ຢູ່ໃຕ້ເວລາ, ແຕ່ວ່າ, ພຣະເຈົ້າເປັນຜູ້ຄວບຄຸມບັນຊາເວລາ. ພຣະອົງເທົ່ານັ້ນທີ່ສາມາດເຫັນເວລາຈາກຈຸດເລີ້ມຕົ້ນຈົນເຖິງຈຸດຈົບ, ແລະພວກເຮົາຕ້ອງຢືນໃນຣັສມີຂອງພຣະອົງ.

### ເປັນຫຍັງບົດຮຽນນີ້ຈຶ່ງສໍາຄັນ

ເວລາເປັນສິນຄ້າທີ່ມີຄ່າສູງ-ບາງຄັ້ງພວກເຮົາພະຍາຍາມບັງຄັບບັນຊາມັນ, ແຕ່ວ່າມີຫຼາຍຄັ້ງເວລາມັນບັງຄັບພວກເຮົາ. ພວກເຮົາບໍ່ພຽງແຕ່ເປັນຜູ້ເກັບຮັກສາເວລາ; ພວກເຮົາເປັນຜູ້ເກັບທ້ອນເວລາ, ເປັນຂ້າທາດຂອງວຽກງານທີ່ເຕັມໃນຕາຕະລາງ. ປົກກະຕິແລ້ວພວກເຮົາບໍ່ມີເວລາພໍ. ພວກເຮົາຕ້ອງຈື່ໄວ້ວ່າເວລາບໍ່ໄດ້ກະທົບກະເທືອນຫຍັງໝົດຕໍ່ພຣະເຈົ້າ. ເມື່ອສິ່ງໃດສິ່ງນຶ່ງບໍ່ເປັນໄປຕາມເວລາທີ່ພວກເຮົາຄາດເອົາໄວ້, ພວກເຮົາຕ້ອງເຂົ້າໃຈວ່າເວລາທີ່ພຣະເຈົ້າວາງແຜນເອົາໄວ້ນັ້ນມັນດີທີ່ສຸດຢູ່ແລ້ວ.

ຜູ້ບັງຄັບເຮືອໃຫຍ່ຍົກຜ້າໃບຂຶ້ນເພື່ອໃຫ້ຖືກຕາມກະແສລົມ. ຊາວນາເພີດເພີນກັບຝົນໃນທົ່ງແລະປູກຝັງພືດຜົນໃນແສງຕາເວັນ. ທັງຜູ້ບັງຄັບເຮືອຫຼືຊາວນາບໍ່ໄດ້ສ້າງອົງປະກອບອັນສໍາຄັນເຫຼົ່ານັ້ນ. ພວກເຂົາພຽງແຕ່ສອຍໂອກາດໃຊ້ສິ່ງເຫຼົ່ານັ້ນ. ນີ້ຄືສິ່ງທີ່ທ່ານແລະຂ້າພະເຈົ້າຕ້ອງເຮັດກັບເວລາ. ຄືກັນກັບຝົນແລະລົມ, ພວກເຮົາຈະບໍ່ມີໂອກາດໄດ້ໃຊ້ສອຍມັນສເມີໄປ. ພວກທ່ານມາເຖິງຂັ້ນນີ້ຫຼືຍັງວ່າເວລາມັນບິນຜ່ານໄປແລະທ່ານຕ້ອງເປັນຜູ້ນໍາທາງ?

ພວກເຮົາຖືກສ້າງໃຫ້ຢູ່ໃນຂອບເຂດຂອງເວລາ; ໂອກາດທີ່ພວກເຮົາມີໃນໂລກນີ້ມີກໍານົດຈໍາກັດ. ເວລາແມ່ນຂອງຂວັນຈາກພຣະເຈົ້າໃຫ້ແກ່ພວກເຮົາ ແລະພວກເຮົາຕ້ອງຮຽນຮູ້ວິທີການໂຕ້ຕອບອັນເໝາະສົມຕໍ່ໂອກາດຂອງບັນຫາຊີວິດທີ່ເກີດຂຶ້ນນັ້ນ.

## <u>ສຶກສາພຣະຄັມພີ</u>

1. **<u>ການຢູ່ໃນເວລາ:</u>** (ປັນຍາຈານ 3:1-8)

ຊີວິດປະກອບດ້ວຍຊ່ວງເວລາດີແລະບໍ່ດີ. ໃນບັນຫາຕ່າງໆຂອງຊີວິດພວກເຮົາ, ພວກເຮົາມີປະສົບການທັງສອງຢ່າງສິ່ງທີ່ເຮົາຄິດມັກແລະສິ່ງທີ່ພວກເຮົາຕ້ອງອົດທົນ. ພວກເຮົາມັກຢາກ**ປູກ**ແທນທີ່ຈະ**ຖອນຖິ້ມ**ແຕ່ວ່າ**ມັນມີຣະດູການສໍາລັບທຸກສິ່ງຢ່າງແລະເວລາສໍາລັບເຣື່ອງຣາວພາຍໃຕ້ຟ້າສວັນ**. ພຣະເຈົ້າຮູ້ວ່າການມີແສງແດດທັງໝົດແລະບໍ່

ມີຝົນເປັນການສ້າງທະເລຊາຍ.

ໜ້າທີ່ຮັບຜິດຊອບຂອງພວກເຮົາຜູ້ຊຶ່ງເປັນສິ່ງຖືກສ້າງໃຕ້ເວລາກໍຄືຕ້ອງເຮັດສິ່ງທີ່ຖືກຕ້ອງໃນເວລາທີ່ຖືກຕ້ອງ. ພວກເຮົາບໍ່ມີອໍານາດພິເສດທີ່ຈະຄວບຄຸມສະຕິໃຫ້ຕັດສິນໃຈວ່າເມື່ອໃດຄວນຈະສ້າງຂຶ້ນ ແລະເມື່ອໃດຄວນຈະມ້າງລົງ. ໂອກາດເຫຼົ່ານັ້ນກໍບົ່ງບອກພວກເຮົາດ້ວຍພວກມັນເອງໂດຍຜ່ານອໍານາດອະທິປະໄຕຂອງພຣະເຈົ້າ ບາງຄົນກໍອາດຈະມີ"ສິ່ງທີ່ຖືກຕ້ອງ" ແຕ່ຖ້າບໍ່ມີເວລາອັນຖືກຕ້ອງແລະໂອກາດ, ຄວາມຊໍານານແລະຄວາມຫ້າວຫັນກໍໃຊ້ການບໍ່ໄດ້. ຂ້າພະເຈົ້າອາດຈະມີຂອງຂວັນໃນການກ່າວຈາທີ່ໜ້າຟັງ, ຄວາມສາມາດໃນການເວົ້າສິ່ງທີ່ຖືກຕ້ອງຕັ້ງແຕ່**ມື້ເກີດ**, ແຕ່ວ່າມັນກໍບໍ່ໄດ້ຊ່ອຍຫຍັງໄດ້ດັ່ງເຊັ່ນໃນໂອກາດທີ່ໄປຢ້ຽມໃຜຜູ້ນຶ່ງທີ່ກໍາລັງຈະ**ຕາຍ**.

ມັນມີເວລາ**ເກັບກ້ອນຫີນ**ແລະເວລາ**ຄວ່າງຖິ້ມ**. ໃນຊ່ວງເວລາຂອງພຣະຄັມພີ, ເພື່ອກໍ່ກວນໃຈສັດຕຣູ, ທ່ານອາດຈະຫວ່ານກ້ອນຫີນໃຫ້ຫຼາຍໆໃສ່ທົ່ງນາຂອງລາວ, ເພາະກ້ອນຫີນທັງໝົດຈະຕ້ອງຖືກເກັບອອກໃຫ້ກ້ຽງຫຼັງຈາກນັ້ນ. ແນ່ນອນ, ກ້ອນຫີນເກົ່າເຫຼົ່ານີ້ແຫຼະທີ່ຈະຖືກເລືອກເອົາໄປໃຊ້ໃນໂຄງການກໍ່ສ້າງອັນໃດອັນນຶ່ງ.

ມີຜູ້ນຶ່ງກ່າວໄວ້ວ່າເລື່ອງຣາວປະວັດສາດຂອງຄົນເປັນເລື່ອງທ້າທາຍແລະໂຕ້ຕອບ. ໃຕ້ອໍານາດອະທິປະໄຕຂອງພຣະເຈົ້າ, ຊີວິດນີ້ສເນີໃຫ້ພວກເຮົາເຫັນຄວາມທ້າທາຍຕ່າງໆ, ເວລາໃນການ**ຊັງ**ແລະ**ສົງຄາມ**, ເວລາ**ຮ້ອງໄຫ້**ແລະ**ຄໍ່າຄວນ**. ສົມດັ່ງເປັນຜູ້ທີ່ຖືກສ້າງໃຕ້ກໍານົດເວລາຂອງພຣະເຈົ້າ, ພຣະອົງເອີ້ນພວກເຮົາໃຫ້ໂຕ້ຕອບໃຫ້ເໝາະສົມຕໍ່ບັນຫາທີ່ປະເຊີນຢູ່ໃນຂນະນັ້ນ.

ພວກເຮົາໄດ້ອ່ານກ່ຽວເຣື່ອງຕະກຸນອິສຊາຄາໃນ 1 ຂ່າວຄາວ 12:32 ຜູ້ທີ່ "ເຂົ້າໃຈເວລາແລະໄດ້ຮູ້ຈັກວ່າແມ່ນຫຍັງທີ່ພວກອິສຣາເອັນຄວນຈະເຮັດ...." ດ້ວຍຄວາມສລາດ, ພວກເຂົາມອງເຫັນທັງສອງຢ່າງໃນຂນະທີ່ເຂົາຢູ່ໃນແລະໂຕ້ຕອບຢ່າງເໝາະສົມ. ມີຄົນບາງພວກບໍ່ເຂົ້າໃຈທັງເວລາ, ຫລືວ່າຄວນຈະເຮັດອັນໃດ. ແຕ່ອີກບາງພວກພ້ອມທີ່ຈະໂດດເຂົ້າເຫດການໂດຍປາສຈາກການໄຕ່ຕອງສະຖານະການທີ່ມີຢູ່ໃນມື. ຢ່າງສຸດທ້າຍ, ຄົນບາງພວກມີຄວາມປ້ອງກັນພັຍຂອງບັນຫາແຕ່ວ່າບໍ່ຄົ້ນຫາວ່າອັນໃດຈໍາເປັນທີ່ຕ້ອງເຮັດ. ພຣະເຈົ້າຕ້ອງການໃຫ້ພວກເຮົາເຂົ້າໃຈທັງສອງຢ່າງ.

## 2. <u>**ຄອງຫາສິ່ງຕລອດໄປເປັນນິດ:**</u> (ປັນຍາຈານ 3:9-11)

ໂຊໂລໂມນໄດ້ເລີ້ມຕົ້ນໃໝ່ ກັບຄໍາຖາມເກົ່າໃນ(ປັນຍາຈານ 1:3) ຕອນລາວຖາມໃນຂໍ້ 9 ວ່າ, **ພວກທີ່ເຮັດການງານຈະໄດ້ຫຍັງເພີ້ມເຕີມຈາກການລົ້ມລຸກຄຸກຄານກັບວຽກນັ້ນ**? ພວກເຮົາຢູ່ໃນໂລກຂອງເວລາ, ຊຶ່ງມັນບໍ່ຍອມມີສ່ວນກ່ຽວຂ້ອງກັບຄວາມຕັ້ງໃຈອັນດີທີ່ສຸດຂອງພວກເຮົາ, ເມື່ອເຫດການອັນບໍ່ປາຖນາຫາກເກີດຂຶ້ນ. ພວກເຮົາອາດຈະເຮັດວຽກເພື່ອຄວາມສງົບສຸກແຕ່ວ່າສົງຄາມກໍລະເບີດຂຶ້ນມາ. ພວກເຮົາອາດຈະລົ້ມລຸກຄຸກຄານໃນການເຮັດໃຫ້ສິ່ງທີ່ຍິ່ງໃຫຍ່ເກີດຂຶ້ນແຕ່ວ່າມັນຍັງພົບກັບຈຸດຈົບແລະສລາຍຫາຍໄປ.

ໜ້າທີ່**ການງານ**ນີ້ເຮັດໃຫ້ພວກເຮົາມີການ**ລົງມືທໍາ**ຢ່າງແທ້ຈິງ, ຄືມຸ້ງຫວັງຢາກເຂົ້າໃຈຕໍ່ເຫດການຕ່າງໆຂອງຊີວິດທີ່ປາກົດຂຶ້ນໃນເວລານັ້ນ ແຕ່ກໍບໍ່ສາມາດຈັບເອົາຄໍາຕອບທັງໝົດຊຶ່ງເປັນການລຶກລັບຊັບຊ້ອນຂອງຊີວິດທີ່ເກີດຂຶ້ນຕາມທາງເວລາຂອງມັນນັ້ນໄດ້. ເຖິງຈະເປັນຢ່າງນັ້ນ, ການເຮັດວຽກງານກໍເຮັດໃຫ້ພວກເຮົາເຫັນເປົ້າໝາຍຂອງມັນ,ເຖິງແມ່ນວ່າມັນຢູ່ໃນຖ້າມກາງບັນຫາຕ່າງໆທີ່ບໍ່ສາມາດອະທິບາຍໄດ້ນັ້ນ. ໃນຕອນທໍາອິດນັ້ນ, ໂຊໂລໂມນກໍສລຸບໄດ້ໂລດວ່າຊີວິດບໍ່ມີຄວາມໝາຍ. ພາຍຫຼັງຈາກການສຶກສາຄົ້ນຄ້ວາເພີ້ມເຕີມແລ້ວລາວກໍາລັງທ້າທາຍຕາມຖານະເດີມໂດຍສລຸບຢ່າງໄຮ້ດຽງສາກ່ຽວກັບຄວາມສາມາດຂອງພວກເຮົາໃນການບໍຣິຫານຊີວິດ.

ການງານຂອງພວກເຮົາ, ຂນະທີ່ມັນຍັງມີຄຸນຄ່າ, ມັນກໍຢູ່ໄດ້ບໍ່ດົນ. ດັ່ງນັ້ນ, ພວກເຮົາຈຶ່ງຍັງມຸ້ງມາດປາຖນາຫາສິ່ງທີ່ຍືນນານຕລອດການ, ບາງສິ່ງທີ່ຕລອດໄປເປັນນິດ. ພຣະເຈົ້າບັນຈຸສິ່ງທີ່**ຕລອດໄປເປັນນິດ**ໄວ້ໃນ**ຫົວໃຈ**ຂອງ

ພວກເຮົາ. ພວກເຮົາມີແນວໂນ້ມໄປຫາສິ່ງຕລອດໄປເປັນນິດ, ມີຄວາມຮູ້ສຶກເຖິງຂອບເຂດຈຳກັດຂອງຊີວິດແລະຄວາມຫວັງໃນການທີ່ຍັງເປັນຢູ່ນີ້ບໍ່ແມ່ນໃນສິ່ງທີ່ກີດຂວາງທີ່ເກີດຈາກຄວາມກົດດັນຂອງເວລາ.

ການຊອກຫາສິ່ງອັນຕລອດໄປເປັນນິດຂອງພວກເຮົາມັນຈັບບໍ່ຄ່ອຍຢູ່-ຄືກັນກັບການພະຍາຍາມຕອກເຫຼັກຕະປູຈັບວຸ້ນໃສ່ກັບຝາ. ພວກເຮົາບໍ່ສາມາດຄົ້ນພົບກິຈການຂອງພຣະເຈົ້າຕັ້ງແຕ່ຕອນເລີ້ມຕົ້ນຈົນຈົບໄດ້. ການພະຍາຍາມຫາຄວາມເຂົ້າໃຈເປົ້າໝາຍໃຫຍ່ຂອງພຣະເຈົ້າມັນຄືກັນກັບເດັກນ້ອຍສາມປີທີ່ພະຍາຍາມຮຽນກົດຫຼັກວິທຍາສາດຈາກນັກວິທຍາສາດຫົວຫຼັກແຫຼມແອວເບີດ ອາຍສຕາຍ. ຂນະທີ່ທັງສອງອາດຈະມີຄວາມສຸກໃນຄວາມສຳພັນ, ລະດັບຂັ້ນຂອງມັນຈະຕ້ອງຢູ່ໃນລະດັບຂອງຜູ້ນ້ອຍກ່ວາບໍ່ແມ່ນຂອງຜູ້ໃຫຍ່ກ່ວາ. ເດັກນ້ອຍບໍ່ສາມາດທີ່ຈະຮັບຄວາມຄິດຂອງນັກວິທຍາສາດທີ່ຍິ່ງໃຫຍ່ໄດ້. ເໝືອນດັ່ງຄວາມສຳພັນຂອງພວກເຮົາຕໍ່ພຣະເຈົ້າ.

ພວກເຮົາບໍ່ສາມາດຮັບເອົາການເຊື່ອຟັງພຣະເຈົ້າຈົນກວ່າພວກເຮົາຈະເຂົ້າໃຈເຫດຜົນທັງໝົດກ່ອນວ່າ ເປັນດ້ວຍເຫດໃດເວລາຂອງຊີວິດຈຶ່ງມາເຖິງພວກເຮົາມັນມາເມື່ອໃດແລະມາໄດ້ຢ່າງໃດ. ໜ້າທີ່ຂອງພວກເຮົາຄືໃຫ້ຮູ້ວ່າພຣະເຈົ້າສ້າງທຸກສິ່ງຢ່າງເໝາະສົມກັບກາລະເວລາຂອງມັນ ແລະໄວ້ວາງໃຈຕໍ່ເວລາຂອງພຣະອົງສຳລັບຊີວິດພວກເຮົາ. ພວກເຮົາສະແດງອອກເຖິງຄວາມໄວ້ວາງໃຈນີ້ໂດຍຜ່ານການເຊື່ອຟັງພຣະທັມຂອງພຣະອົງ.

## 3. <u>ຢືນຢູ່ໃນຣັສມີຂອງພຣະເຈົ້າ</u>:(ປັນຍາຈານ 3:12-14)

ພຣະທັມປັນຍາຈານປຽບເໝືອນໄຟທີ່ຫຼູ່ຫຼອມໃຫ້ເປັນຂອງແທ້. ພຣະເຈົ້າບໍ່ຕ້ອງການທີ່ຈະຈູດເຜົາພວກເຮົາແຕ່ວ່າເພື່ອໃຫ້ພວກເຮົາມີຊີວິດໃນຄວາມບໍຣິສຸດ. ຄວາມຮູ້ອັນຈຳກັດຂອງພວກເຮົາໃນເຫດການຕ່າງໆຂອງຊີວິດບໍ່ມີຂອບເຂດຈຳກັດຄວາມລົ້ນເລີງຂອງພວກເຮົາຕໍ່ປະສົບການຕ່າງໆຂອງຊີວິດ. ພວກເຮົາສາມາດມີໜ້າຊົມຊື່ນຍິນດີໃນຂອບເຂດຈຳກັດຂອງຊີວິດ. ເໝືອນດັ່ງຜູ້ຕິດຕາມພຣະຄຣິດສາມາດປະສົບການກັບສັນຕິສຸກທີ່ເກີນຄວາມເຂົ້າໃຈ (ຟີລິບປອຍ 4:7), ຄວາມຍິນດີກໍສາມາດເປັນຈິງໄດ້ເຊັ່ນດຽວກັນ.

ເມື່ອພວກເຮົາເລືອກເອົາຄວາມຍິນດີເໜືອຄວາມເຂົ້າໃຈແບບຜິດໆໃນຄວາມເລິກລັບຂອງຊີວິດ, ຄວາມພໍໃຈອັນແທ້ຈິງກໍມາແທນທີ່. ມັນບໍ່ມີຫຍັງອີກທີ່ດີໄປກວ່ານີ້. ພວກຄົນທີ່ບໍ່ມີເມືອງພໍນັ້ນກໍຊອກຫາຫຼາຍຍິ່ງຂຶ້ນປານນັ້ນມັນກໍບໍ່ມີຫຍັງເໜືອໄປກວ່າຄວາມຍິນດີອັນງ່າຍໆນີ້, ຄືການສະແດງອອກຂອງພວກເຮົາເຖິງການໄວ້ວາງໃຈໃນພຣະເຈົ້າ. ຂນະທີ່ມື້ວັນຂອງຂ້າພະເຈົ້າກຳລັງສັ້ນລົງ, ມັນກໍຍັງສາມາດຫວານຊື່ນຕໍ່ໄປ.ເຊເນກາ ໄດ້ເວົ້າວ່າ“ນິທານເປັນແນວໃດ, ຊີວິດກໍເປັນຢ່າງນັ້ນ; ບໍ່ແມ່ນມັນນານເທົ່າໃດ, ແຕ່ແມ່ນມັນດີເທົ່າໃດ, ນັ້ນຖືວ່າໃຊ້ໄດ້.”

ການມີຄວາມພໍໃຈແມ່ນຂອງຂວັນຈາກພຣະເຈົ້າ. ອຳນາດອະທິປະໄຕຂອງພຣະອົງບໍ່ພຽງແຕ່ສະແດງໃຫ້ເຫັນຄວາມເປັນລະບຽບຂອງເວລາແຫ່ງຊີວິດແລະເຫດການຕ່າງໆເທົ່ານັ້ນແຕ່ວ່າໃນຂອງຂວັນຂອງພຣະອົງຄືຄວາມພຽງພໍໃຈໃຫ້ກັບພວກເຮົາ. ບໍ່ວ່າຈະເປັນການເຮັດວຽກງານຫຼືການຫຼິ້ນກໍຕາມໃຫ້ເບິ່ງໃນທາງຂອງພຣະເຈົ້າສຳລັບຄວາມໝາຍແລະຄວາມຄົບເຕັມຂອງພວກມັນ.

ມີແຕ່ພຣະເຈົ້າເທົ່ານັ້ນທີ່ເຫັນການຕິດຕໍ່ລະຫວ່າງທຸກໆ ເຫດການຂອງຊີວິດແລະກິຈການອັນຕລອດໄປເປັນນິດຂອງພຣະອົງ. ມີແຕ່ພຣະອົງເທົ່ານັ້ນທີ່ເຮັດໃຫ້ການງານຂອງຊີວິດຄົບເຕັມແລະຕົບແຕ່ງຂຶ້ນໃໝ່ກັບຄວາມໝາຍ. ສິ່ງທີ່ພຣະອົງໄດ້ກະທຳຈະຕັ້ງຕລອດໄປເປັນນິດ. ຜົນຂອງການມອງເຫັນພຣະອົງໃນຄວາມສວ່າງເຊັ່ນນີ້ຄວນທີ່ຈະໂຄຣົບນັບຖື. ພວກເຮົາຄວນຢືນຢູ່ໃນຣັສມີຂອງພຣະອົງ. ເມື່ອຂ້າພະເຈົ້າຄິດເຖິງທັມມະຊາດອັນຕລອດໄປເປັນນິດຂອງພຣະເຈົ້າແລະກິຈການຂອງພຣະອົງ, ຂ້າພະເຈົ້າກໍຊ່ວຍບໍ່ໄດ້ນອກຈາກໂຕ້ຕອບດ້ວຍຄວາມໂຄຣົບຢຳເກງ. ຂ້າພະເຈົ້າເປັນຄົນທີ່ຖືກສ້າງຂຶ້ນໃນຂອບເຂດຈຳກັດຂອງເວລາແລະສະຖານທີ່. ຂ້າພະເຈົ້າສາມາດຢູ່ບ່ອນດຽວໃນເວລາດຽວເທົ່ານັ້ນ. ຊີວິດຂອງຂ້າພະເຈົ້າໃນທີ່ນີ້ມີຂອບເຂດຈຳກັດ-ຊຶ່ງມັນເປັນການຄວບຄຸມບັນຊາເໜືອເຫດການຕ່າງໆຂອງຊີວິດຂອງຂ້າພະເຈົ້າ.

“ເວລາຢູ່ໃນຂວດແກ້ວ” ຊື່ເພງນຶ່ງໃນປີ 1970 ຊຶ່ງບັນລະຍາຍເຣື່ອງຂອງເວລາ: “ແຕ່ເບິ່ງເໝືອນວ່າມັນບໍ່ມີເວລາພຽງພໍທີ່ຈະເຮັດໃນສິ່ງຕ່າງໆທີ່ເຮົາຢາກຈະເຮັດເມື່ອເຮົາພົບພວກມັນແລ້ວ.” ຄຳເວົ້າເຫຼົ່ານີ້ນຳພາໃຫ້ເຫັນຄວາມຈຳກັດຊີວິດຂອງຂ້າພະເຈົ້າ. ແຕ່ວ່າພວກມັນບໍ່ໄດ້ກະທົບກະເທືອນຕໍ່ພຣະເຈົ້າ. ຂ້າພະເຈົ້ານະມັສການພຣະອົງວ່າເປັນພຣະເຈົ້າຜູ້ທີ່ປົກຄອງເວລາແລະເປັນທຳຄອຍເໜືອມັນ.

## ບົດຮຽນຊີວິດ

ບໍ່ມີຫຍັງທີ່ຈະເປັນສິ່ງເຕືອນສະຕິເຖິງຂອບເຂດຈຳກັດຂອງມະນຸດເທົ່າກັບໂມງໄດ້ເລີຍ. ມັນດິດໄປໜ້າສເມີແລະນຳພວກເຮົາໄປໃກ້ເຂດທີ່ເປັນເວລາທີ່ພວກເຮົາບໍ່ມີເຫຼືອ. ຂອບເຂດຈຳກັດອັນນີ້ບໍ່ສາມາດແຕະຕ້ອງພຣະເຈົ້າໄດ້. ເພາະເຫດນີ້, ພວກເຮົາ-ຢູ່ໃຕ້ເວລາ-ຄວນຈະນະມັສການແລະໂຄຣົບຢຳເກງພຣະອົງ-ຜູ້ຊົງຢູ່ເໜືອເວລາ.

ພວກເຮົາເຄີຍໄດ້ຍິນວ່າເວລາເປັນເງິນເປັນຄຳ. ຄວາມຈິງແລ້ວມັນມີຄ່າຫຼວງຫຼາຍກວ່າອີກເພາະວ່າມັນອາດຈະເຮັດໃຫ້ພວກເຮົາໄດ້ເງິນຕື່ມຂຶ້ນອີກ. ມັນບໍ່ເປັນເຊັ່ນນັ້ນກັບເວລາ. ມັນເປັນຕົວຂຍາຍອອກອັນຍິ່ງໃຫຍ່; ທຸກໆຄົນໄດ້ຮັບຈຳນວນເທົ່າກັນໝົດໃນແຕ່ລະວັນ.

ໃນແສງແຫ່ງຄຸນຄ່າຂອງມັນ, ພວກເຮົາຄວນຈະເຂົ້າໃຈກ່ຽວກັບເວລາດັ່ງຕໍ່ໄປນີ້:

- ❖ ທຸກໆຣະດູການຂອງຊີວິດແມ່ນພຣະເຈົ້າເປັນຜູ້ສະຖາປະນາຂຶ້ນ.
- ❖ ດັ່ງທີ່ໄດ້ຖືກສະຖາປະນາໂດຍພຣະເຈົ້າ, ເຫດການຕ່າງໆຂອງຊີວິດຖືກກະທຳໃຫ້ເກີດຈາກຂ້າພະເຈົ້າ.
- ❖ ໃນຂນະນີ້, ການທ້າທາຍແຕ່ລະອັນໃນຊີວິດຂອງຂ້າພະເຈົ້າແມ່ນຈຳເປັນຕ້ອງໂຕ້ຕອບໃນທາງຊອບທັມ.
- ❖ ຂນະທີ່ກຳລັງເຮັດໃນສິ່ງທີ່ຖືກຕ້ອງໃນເວລາອັນຖືກຕ້ອງ, ຂ້າພະເຈົ້າຕ້ອງເຮັດໃນທາງທີ່ຖືກຕ້ອງເຊັ່ນກັນ.
- ❖ ພຣະເຈົ້າຈະປະທານການມອງເຫັນໄກແກ່ຂ້າພະເຈົ້າໃຫ້ເຂົ້າໃຈເວລາທີ່ຈະຢູ່ແລະຄວນຈະກະທຳ.

ພວກເຮົາບໍ່ສາມາດເຫັນແລະເຂົ້າເກືອບບໍ່ເຂົ້າໃຈຣະດູການໃນຊີວິດຂອງພວກເຮົາ-ບໍ່ຮູ້ວ່າເມື່ອໃດມັນເລີ້ມຕົ້ນແບະຈົບລົງ. ພວກເຮົາເປັນເໝືອນຄົນຜູ້ນຶ່ງທີ່ຍືນຢູ່ຂ້າງທາງກຳລັງເບິ່ງການແຫ່ຂະບວນຜ່ານກາຍໄປ. ປະສົບການທີ່ເຮົາໄດ້ຮັບກໍຄືມັນຜ່ານໄປເທື່ອລະອັນ, ແລະພວກເຮົາກໍຢູ່ກັບມັນພຽງຊົ່ວຄາວດຽວ.

ແຕ່ວ່າ, ທັສນະຂອງພຣະເຈົ້າເປັນເໝືອນກັບຄົນຜູ້ນຶ່ງທີ່ຍືນຢູ່ເທິງຕຶກສູງແລ້ວເຫັນການແຫ່ຂະບວນຕັ້ງແຕ່ຕົ້ນແຖວຈົນສຸດແຖວໃນເວລາດຽວກັນ. ພຣະຜູ້ສ້າງຂອງພວກເຮົາທີ່ຮູ້ໝົດທຸກສິ່ງ, ພຣະເຈົ້າທີ່ຢູ່ເໜືອເວລາແລະພວກເຮົາຄວນຈະໂຕ້ຕອບຕໍ່ຄວາມຍິ່ງໃຫຍ່ອັນຕລອດໄປເປັນນິດຂອງພຣະອົງດ້ວຍການນະມັສການແລະໂຄຣົບຢຳເກງ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ PA